Lao - ພຣະວິນຍານບໍລິສຸດ ການອະທິຖານ ພຣະຄໍາພີ - Holy Spirit Scriptures

ອົບພະຍົກ 35:31 ແລະພຣະອົງໄດ້ຊົງໃຫ້ຜູ້ນັ້ນປະກອບດ້ວຍພຣະວິນຍານຂອງພຣະເຈົ້າໃຫ້ມີ ສະຕິປັນຍາແລະຄວາມເຂົ້າໃຈ ແລະຄວາມຮູ້ໃນການຊ່າງຝີມືຕ່າງໆ

ຈົດບັນຊີ 11:25 ແລ້ວພຣະຜູ້ເປັນເຈົ້າຊົງສະເດັດລົງມາເປັນກ້ອນເມກແລະກ່າວກັບໂມເຊ ໃນຂນະດຽວກັນນັ້ນ ພຣະອົງກໍຊົງປະທານພຣະວິນຍານບໍຣິສຸດ ທີ່ໂມເຊມີແລ້ວນັ້ນໃຫ້ ພວກຜູ້ນໍາເຈັດສິບຄົນນັ້ນ ພໍພຣະວິນຍານເຂົ້າສວມທັບ ພວກເຂົາກໍຮ້ອງຂຶ້ນດ້ວຍສຽງ ດັງເຫມືອນກັບຄົນເສັງສະຕິແລ້ວບໍ່ດົນກໍງຽບລົງ

1 ຊາມູເອນ 10:6 ແລ້ວພຣະວິນຍານຂອງພຣະເຈົ້າຈະເຂົ້າສະຖິດຢູ່ໃນຕົວທ່ານ ທ່ານຈະເຂົ້າ ຮ່ວມໃນການທໍານວາຍ ແລະປ່ຽນເປັນຄົນຜູ້ໃຫມ່

2 ຊາມູເອນ 23:2 “ພຣະວິນຍານຂອງພຣະຜູ້ເປັນເຈົ້າຊົງກ່າວຜ່ານຂ້າພະເຈົ້າ ຖ້ອຍຄໍາຂອງ ພຣະອົງຊົງຢູ່ໃນສົບປາກຂອງຂ້າພະເຈົ້າ

ໂຢບ 33:4 ພຣະວິນຍານຂອງພຣະເຈົ້າໄດ້ຊົງສ້າງຂ້າພະເຈົ້າ ແລະລົມປານຂອງອົງຜູ້ມີອໍາ ນາດຍິ່ງໃຫຍ່ໄດ້ໃຫ້ຊີວິດແກ່ຂ້າພະເຈົ້າ

ເອຊາຢາ 11:2 ພຣະວິນຍານບໍຣິສຸດຈະສະຖິດຢູ່ນໍາພຣະອົງ ຣິດທານຸພາບຂອງພຣະຜູ້ເປັນ ເຈົ້າຈະປະທານປັນຍາໃຫ້ພຣະອົງ ຄືຄວາມຮູ້ ແລະຄວາມຈໍານິຈໍານານໃນການປົກຄອງ ພຣະອົງຈະຮູ້ຈັກນໍ້າພຣະທັຍພຣະຜູ້ເປັນເຈົ້າ ແລະຢໍາເກງພຣະອົງ

ມີກາ 3:8 ແຕ່ສໍາລັບຂ້າພະເຈົ້າແລ້ວ ຂ້າພະເຈົ້າເຕັມໄປດ້ວຍພຣະວິນຍານຂອງພຣະຜູ້ເປັນ ເຈົ້າ ຄືດ້ວຍຣິດເດດ ດ້ວຍຄວາມຍຸດຕິທັມ ແລະດ້ວຍຄວາມກ້າຫານ ເພື່ອບອກປະຊາຊົນ ອິສຣາເອນໃຫ້ສໍານຶກເຖິງຄວາມບາບຂອງພວກເຂົາ

ເຊຄາຣິຢາ 4:6 ແລ້ວທ່ານຈຶ່ງຕອບຂ້າພະເຈົ້າວ່າ, “ນີ້ເປັນພຣະທັມຂອງພຣະຜູ້ເປັນເຈົ້າທີ່ໃຫ້ ໄວ້ກັບເຊຣຸບບາເບນວ່າ ບໍ່ແມ່ນດ້ວຍກໍາລັງ ບໍ່ແມ່ນດ້ວຍຣິດທານຸພາບ ແຕ່ດ້ວຍວິນຍານ ຂອງເຣົາ ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ແຫລະ

ມັດທາຍ 12:28 ແຕ່ຖ້າເຣົາຂັບໄລ່ຜີອອກດ້ວຍພຣະວິນຍານຂອງພຣະເຈົ້າ ດັ່ງນັ້ນຣາຊອານາ ຈັກຂອງພຣະເຈົ້າກໍມາເຖິງພວກທ່ານແລ້ວ

ມັດທາຍ 28:19 ເຫດສັນນັ້ນພວກທ່ານຈົ່ງໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບ

ບັບຕິສະມາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ

ມາຣະໂກ 1:10 ພໍພຣະອົງສະເດັດຂຶ້ນຈາກນ້ຳ ໃນທັນໃດນັ້ນກໍຊົງເຫັນທ້ອງຟ້າກຳລັງແຫວກ ອອກ ແລະພຣະວິນຍານເຫມືອນດັ່ງນົກເຂົາສະເດັດລົງມາສູ່ພຣະອົງ

ມາຣະໂກ 13:11 ແຕ່ເມື່ອເຂົາມອບທ່ານໄວ້ນັ້ນ ຢ່າເປັນທຸກຮ້ອນໃຈກ່ອນວ່າຈະເວົ້າຢ່າງໃດ ແຕ່ຈົ່ງເວົ້າຕາມທີ່ພຣະເຈົ້າຊົງໂຜດໃຫ້ທ່ານເວົ້າ ເພາະວ່າບໍ່ແມ່ນທ່ານເປັນຜູ້ເວົ້າ ແຕ່ ແມ່ນພຣະວິນຍານບໍຣິສຸດຊົງເປັນຜູ້ເວົ້າ

ລູກາ 2:26 ພຣະວິນຍານບໍຣິສຸດໄດ້ຊົງສະແດງແກ່ທ່ານແລ້ວວ່າ ທ່ານຈະບໍ່ຕາຍຈົນກວ່າຈະໄດ້ ເຫັນພຣະຄຣິດຜູ້ມາຈາກອົງພຣະຜູ້ເປັນເຈົ້າ

ລູກາ 4:1 ພຣະເຢຊູເຕັມໄປດ້ວຍພຣະວິນຍານບໍຣິສຸດ ໄດ້ສະເດັດກັບຈາກແມ່ນ້ຳຈໍແດນແລະ ພຣະວິນຍານໄດ້ຊົງນຳພຣະອົງໄປໃນປ່າ

ລູກາ 4:18-21 “ພຣະວິນຍານແຫ່ງອົງພຣະຜູ້ເປັນເຈົ້າຊົງສະຖິດຢູ່ເທິງຂ້າພະເຈົ້າ ເພາະວ່າ ພຣະອົງໄດ້ຫົດສົງຕັ້ງຂ້າພະເຈົ້າໄວ້ ໃຫ້ປະກາດຂ່າວປະເສີດແກ່ຄົນຍາກຈົນ ພຣະອົງໄດ້ຊົງ ໃຊ້ຂ້າພະເຈົ້າປະກາດອິສຣະພາບແກ່ບັນດາຊະເລີຍ ໃຫ້ປະກາດແກ່ຄົນຕາບອດວ່າຈະໄດ້ ເຫັນຮຸ່ງອີກ ໃຫ້ປ່ອຍຜູ້ຖືກບີບບັງຄັບເປັນອິສຣະ 19 ແລະໃຫ້ປະກາດປີທີ່ອົງພຣະຜູ້ເປັນ ເຈົ້າຈະຊົງເມດຕານັ້ນ” 20 ແລ້ວພຣະອົງຊົງຮຳຫນັງສືນັ້ນສົ່ງຄືນໃຫ້ເຈົ້າຫນ້າທີ່ ແລະຊົງນັ່ງ ລົງ ຕາຂອງຄົນທັງປວງໃນໂຮງທັມມະເທສນາກໍເພ່ງເບິ່ງພຣະອົງ 21 ພຣະອົງຈຶ່ງຊົງຕັ້ງ ຕົນກ່າວກັບເຂົາວ່າ, “ພຣະຄັມພີຕອນນີ້ກໍສຳເຣັດໃນວັນນີ້ ຄືເມື່ອຫູຂອງທ່ານກຳລັງໄດ້ ຍິນຢູ່ນີ້”

ລູກາ 12:11,12 ເມື່ອເຂົາຈະພາພວກທ່ານໄປຕໍ່ຫນ້າທີ່ປະຊຸມໃນໂຮງທັມມະເທສນາ ຫລືຕໍ່ ຫນ້າຜູ້ປົກຄອງແລະຜູ້ມີອຳນາດ ຢ່າຄິດອຸກໃຈວ່າຈະແກ້ຕົວຢ່າງໃດ ຫລືຈະເວົ້າຢ່າງໃດ 12 ເພາະໃນໂມງນັ້ນພຣະວິນຍານບໍຣິສຸດຈະຊົງໂຜດສອນທ່ານວ່າຄວນຈະເວົ້າອັນໃດ”

ໂຍຮັນ 7:38,39 ຜູ້ທີ່ວາງໃຈໃນເຮົາແມ່ນ້ຳອັນມີຊີວິດຈະໄຫລອອກຈາກພາຍໃນຜູ້ນັ້ນ ຕາມທີ່ ພຣະຄັມພີກ່າວໄວ້ແລ້ວ” 39 ສິ່ງທີ່ພຣະເຢຊູຊົງກ່າວນັ້ນຫມາຍເຖິງພຣະວິນຍານ ຊຶ່ງຜູ້ທີ່ ວາງໃຈໃນພຣະອົງຈະໄດ້ຮັບ ເຫດວ່າຍັງບໍ່ໄດ້ຊົງປະທານພຣະວິນຍານໃຫ້ ເພາະພຣະເຢຊູຍັງ ບໍ່ໄດ້ຊົງຮັບສະງ່າຣາສີ

ໂຍຮັນ 14:16,17,26 ຝ່າຍເຮົາຈະທູນຂໍພຣະບິດາ ແລະພຣະອົງຈະຊົງປະທານຜູ້ຊ່ວຍອີກຜູ້ນຶ່ງ

ໃຫ້ແກ່ພວກທ່ານ ເພື່ອຈະຢູ່ກັບພວກທ່ານຕລອດໄປເປັນນິດ 17 ຄືພຣະວິນຍານແຫ່ງ
ຄວາມຈິງ ຊຶ່ງໂລກບໍ່ອາດຈະຮັບໄດ້ເພາະໂລກບໍ່ເຫັນແລະບໍ່ຮູ້ຈັກພຣະອົງ ແຕ່ທ່ານທັງ
ຫລາຍຮູ້ຈັກພຣະອົງ ເພາະພຣະອົງຊົງສະຖິດຢູ່ກັບພວກທ່ານ ແລະຈະປະທັບຢູ່ໃນພວກ
ທ່ານ 26 ແຕ່ພຣະຜູ້ຊ່ວຍຄືພຣະວິນຍານບໍຣິສຸດ ທີ່ພຣະບິດາຈະຊົງໃຊ້ມາໃນນາມຂອງເຮົາ
ອົງນັ້ນແຫລະ, ຈະຊົງສອນທ່ານທັງຫລາຍທຸກໆສິ່ງ ແລະຈະເຕືອນພວກທ່ານໃຫ້ລະນຶກ
ເຖິງທຸກສິ່ງທີ່ເຮົານີ້ໄດ້ກ່າວແກ່ພວກທ່ານແລ້ວນັ້ນ

ໂຍຮັນ 16:7,8 ຢ່າງໃດກໍຕາມ ເຮົາກໍບອກຄວາມຈິງຕໍ່ທ່ານທັງຫລາຍວ່າ ການທີ່ເຮົາຈາກໄປ
ນັ້ນເປັນປໂຍດແກ່ພວກທ່ານ ເພາະຖ້າເຮົາບໍ່ໄປ ອົງພຣະຜູ້ຊ່ວຍນັ້ນຈະບໍ່ໄດ້ສະເດັດມາຫາ
ພວກທ່ານ ແຕ່ຖ້າເຮົາໄປແລ້ວ ເຮົາກໍຈະໃຊ້ພຣະອົງນັ້ນມາຫາພວກທ່ານ 8 ເມື່ອພຣະອົງ
ສະເດັດມາແລ້ວ ພຣະອົງນັ້ນແຫລະ, ຈະຊົງບັນດົນໃຫ້ໂລກຮູ້ແຈ້ງໃນເຣື່ອງຄວາມຜິດບາບ
ຄວາມຊອບທັມ ແລະການພິພາກສາ

ໂຍຮັນ 16:13-15 ແຕ່ເມື່ອພຣະອົງນັ້ນ ຄືພຣະວິນຍານແຫ່ງຄວາມຈິງຈະສະເດັດມາແລ້ວ
ພຣະອົງຈະນຳທ່ານທັງຫລາຍໄປສູ່ຄວາມຈິງທັງຫມົດ ເພາະພຣະອົງຈະບໍ່ກ່າວແຕ່ລຳພັງ
ຂອງພຣະອົງເອງ ແຕ່ພຣະອົງຊົງໄດ້ຍິນສິ່ງໃດກໍຈະຊົງກ່າວສິ່ງນັ້ນ ແລະຈະຊົງປະກາດໃຫ້
ທ່ານທັງຫລາຍຮູ້ເຖິງສິ່ງເຫລົ່ານີ້ທີ່ຈະເກີດຂຶ້ນ 14 ພຣະອົງຈະຊົງໃຫ້ເຮົາໄດ້ຮັບກຽດ ເພາະ
ວ່າພຣະອົງຈະຊົງເອົາສິ່ງທີ່ເປັນຂອງເຮົາມາປະກາດແກ່ທ່ານທັງຫລາຍ 15 ທຸກໆສິ່ງທີ່ພຣະ
ບິດາຊົງມີຢູ່ນັ້ນກໍເປັນຂອງເຮົາ ເຫດສັນນັ້ນເຮົາຈຶ່ງກ່າວວ່າ ພຣະວິນຍານຊົງເອົາສິ່ງຊຶ່ງ
ເປັນຂອງເຮົານັ້ນມາປະກາດແກ່ທ່ານທັງຫລາຍ

ໂຍຮັນ 20:21,22 ພຣະເຍຊູຊົງກ່າວກັບເຂົາອີກວ່າ, “ສັນຕິສຸກຈົ່ງມີຢູ່ກັບທ່ານທັງຫລາຍ ພຣະ
ບິດາໄດ້ຊົງໃຊ້ເຮົາມາຢ່າງໃດ ຝ່າຍເຮົາກໍໃຊ້ທ່ານທັງຫລາຍໄປຢ່າງນັ້ນ” 22 ເມື່ອຊົງກ່າວ
ຢ່າງນັ້ນແລ້ວພຣະອົງຊົງລະບາຍລົມອອກຈາກພຣະໂອດໃສ່ເຂົາ ໂດຍບອກວ່າ, “ທ່ານທັງ
ຫລາຍຈົ່ງຮັບເອົາພຣະວິນຍານບໍຣິສຸດ

ກິຈການ 1:2,5 ຈົນເຖິງວັນທີ່ພຣະເຈົ້າຊົງຮັບພຣະອົງຂຶ້ນເມືອ ຄືພາຍຫລັງທີ່ພຣະອົງຊົງສັ່ງ
ໂດຍເດດພຣະວິນຍານບໍຣິສຸດແກ່ພວກອັຄສາວົກທີ່ຊົງເລືອກໄວ້ນັ້ນ 5 ເພາະວ່າໂຍຮັນໃຫ້
ບັບຕິສະມາດ້ວຍນ້ຳກໍແມ່ນ ແຕ່ຕໍ່ໄປອີກບໍ່ເຫົ່ງທ່ານທັງຫລາຍຈະໄດ້ຮັບບັບຕິສະມາດ້ວຍ
ພຣະວິນຍານບໍຣິສຸດ”

ກິຈການ 1:8 ແຕ່ທ່ານທັງຫລາຍຈະໄດ້ຮັບພຣະຣາຊທານຣິດເດດ ເມື່ອພຣະວິນຍານບໍຣິສຸດ ຈະສະເດັດມາເຖິງພວກທ່ານ ແລະພວກທ່ານຈະເປັນພຍານຝ່າຍເຮົາໃນກຸງເຢຣູຊາເລັມ, ຕລອດທົ່ວແຂວງຢູດາຍ, ກັບແຂວງຊາມາເຣັງ, ແລະຈົນເຖິງທີ່ສຸດປາຍແຜ່ນດິນໂລກ”

ກິຈການ 2:1-4 ເມື່ອຄົບຮອບວັນເທສການເພັນເຕຄອສ ເຂົາທັງຫມົດໄດ້ພ້ອມກັນຢູ່ໃນບ່ອນ ດຽວ 2 ໃນທັນໃດນັ້ນເກີດມີສຽງມາຈາກຟ້າສວັນເຫມືອນສຽງລົມພະຍຸກ້າ ກ້ອງສນັ່ນທົ່ວ ເຮືອນທີ່ເຂົານັ່ງຢູ່ນັ້ນ 3 ມີລີ້ນເປັນຮູບເຫມືອນແປວໄຟໄດ້ປາກົດໃຫ້ເຂົາເຫັນແລະລີ້ນນັ້ນ ແຕກກະຈາຍອອກໄປຢູ່ເທິງເຂົາທຸກຄົນຜູ້ລະລີ້ນ 4 ເຂົາເຫລົ່ານັ້ນກໍເຕັມໄປດ້ວຍພຣະວິນ ຍານບໍຣິສຸດ ແລະຕັ້ງຕົ້ນປາກພາສາຕ່າງໆຕາມທີ່ພຣະວິນຍານຊົງໂຜດໃຫ້ເຂົາເວົ້ານັ້ນ

ກິຈການ 2:17-19 “ພຣະເຈົ້າຊົງກ່າວວ່າ ໃນຄາວສຸດທ້າຍເຮົາຈະຖອກວິນຍານຂອງເຮົາປະ ທານລົງໃສ່ມະນຸດທັງປວງ ລູກຊາຍແລະລູກຍິງຂອງພວກທ່ານຈະທຳນວາຍ ຊາຍຫນຸ່ມ ຂອງພວກທ່ານຈະຝັນເຫັນ 18 ຝ່າຍເຮົາໃນຄາວນັ້ນເຮົາຈະຖອກວິນຍານຂອງເຮົາປະ ທານລົງໃສ່ຂ້າໃຊ້ຊາຍຍິງຂອງເຮົາ ແລະເຂົາຈະທຳນວາຍ 19 ເຮົາຈະສະແດງການອັສຈັນໃນ ອາກາດເບື້ອງເທິງ ແລະຫມາຍສຳຄັນທີ່ແຜ່ນດິນໂລກເບື້ອງລຸ່ມ ຄືເລືອດແລະໄຟກັບອາຍ ຄວັນ (ໂຍເອນ 2:28,29)

ກິຈການ 2:33 ເມື່ອຊົງຖືກຍົກຂຶ້ນຢູ່ທີ່ພຣະຫັດກ້ຳຂວາຂອງພຣະເຈົ້າ ແລະໄດ້ຊົງຮັບພຣະວິນ ຍານບໍຣິສຸດຈາກພຣະບິດາຕາມພຣະສັນຍາ ພຣະອົງໄດ້ຊົງຖອກພຣະວິນຍານນັນລົງມາ ດັ່ງພວກທ່ານໄດ້ເຫັນແລະໄດ້ຍິນແລ້ວນັ້ນ

ກິຈການ 2:38 ຝ່າຍເປໂຕຈຶ່ງກ່າວແກ່ເຂົາວ່າ, “ຈົ່ງຖິ້ມໃຈເກົ່າເອົາໃຈໃຫມ່ ແລະຮັບບັບຕິສະ ມາໃນພຣະນາມຂອງອົງພຣະເຍຊູຄຣິດທຸກຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານ ແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊທານ ຄືພຣະວິນຍານບໍຣິສຸດ

ກິຈການ 4:31 ເມື່ອເຂົາອ້ອນວອນຈົບລົງແລ້ວ ບ່ອນທີ່ເຂົາປະຊຸມກັນນັ້ນກໍສະທ້ານຫວັ່ນ ໄຫວ ແລະຄົນເຫລົ່ານັ້ນໄດ້ເຕັມໄປດ້ວຍພຣະວິນຍານບໍຣິສຸດທຸກຄົນ ຈຶ່ງພາກັນກ່າວພຣະ ທັມຂອງພຣະເຈົ້າດ້ວຍໃຈກ້າຫານ

ກິຈການ 8:15-17 ທ່ານທັງສອງໄດ້ລົງໄປອ້ອນວອນສຳລັບເຂົາເພື່ອໃຫ້ເຂົາໄດ້ຮັບພຣະວິນ ຍານບໍຣິສຸດ 16 ເພາະພຣະວິນຍານບໍຣິສຸດຍັງບໍ່ທັນໄດ້ລົງມາເທິງເຂົາຈັກຄົນ ມີແຕ່ເຂົາໄດ້ ຮັບບັບຕິສະມາໃນພຣະນາມແຫ່ງພຣະເຍຊູເຈົ້າເທົ່ານັ້ນ 17 ເປໂຕກັບໂຍຮັນຈຶ່ງວາງມືໃສ່

ເຂົາ ແລ້ວເຂົາກໍໄດ້ຮັບພຣະວິນຍານບໍຣິສຸດ

ກິຈການ 8:39 ເມື່ອທ່ານທັງສອງຂຶ້ນຈາກນ້ຳແລ້ວ ພຣະວິນຍານຂອງອົງພຣະຜູ້ເປັນເຈົ້າໄດ້ຊົງຮັບເອົາຟີລິບໄປເສັງ ສ່ວນຄົນເທີ່ອຍນັ້ນກໍບໍ່ໄດ້ເຫັນຟີລິບຕໍ່ໄປອີກ ທ່ານຈຶ່ງເດີນທາງຕໍ່ໄປດ້ວຍຄວາມຊົມຊື່ນຍິນດີ (1 ກະສັດ 18:12)

ກິຈການ 9:31 ສັນນັ້ນຄຣິສຕະຈັກຕລອດແຂວງຢູດາຍ ແຂວງຄາລີເລ ແລະແຂວງຊາມາເຣັງຈຶ່ງມີຄວາມສງົບສຸກແລະຈະເຣີນຂຶ້ນ ດຳເນີນໄປໃນຄວາມຢຳເກງອົງພຣະຜູ້ເປັນເຈົ້າ ສ່ວນຄຣິສຕະສະມາຊິກກໍທະວີຫລາຍຂຶ້ນດ້ວຍໄດ້ຮັບຄວາມສົ່ງເສີມຈາກພຣະວິນຍານບໍຣິສຸດ

ກິຈການ 10:44,45 ຂນະທີ່ເປໂຕຍັງກ່າວດັ່ງນີ້ຢູ່ ພຣະວິນຍານບໍຣິສຸດໄດ້ສະເດັດລົງມາເທິງຄົນທັງປວງທີ່ກຳລັງຟັງພຣະທັມນັ້ນ 45 ສ່ວນພວກລູກສິດທີ່ເປັນຝ່າຍພິທີຕັດ ທີ່ໄດ້ມາກັບເປໂຕກໍງຶດງໍ້ອັສຈັນ ເພາະວ່າພຣະເຈົ້າໄດ້ຊົງປະທານພຣະວິນຍານບໍຣິສຸດໃຫ້ລົງມາເທິງຄົນຕ່າງຊາດເຫມືອນກັນ

ກິຈການ 11:15 ເບິ່ງແມ່, ໃນທັນໃດນັ້ນມີຊາຍສາມຄົນມາຢືນຢູ່ຫນ້າຕຶກທີ່ພວກຂ້າພະເຈົ້າຢູ່ນັ້ນ ຮັບໃຊ້ມາຈາກເມືອງກາຍຊາເຣັງມາຫາຂ້າພະເຈົ້າ

ກິຈການ 13:52 ແຕ່ພວກສິດກໍເຕັມໄປດ້ວຍຄວາມຊົມຊື່ນຍິນດີ ແລະດ້ວຍພຣະວິນຍານບໍຣິສຸດ

ກິຈການ 19:6 ເມື່ອໂປໂລໄດ້ວາງມືໃສ່ເຂົາແລ້ວ ພຣະວິນຍານບໍຣິສຸດກໍສະເດັດມາເທິງເຂົາ ເຂົາຈຶ່ງຕັ້ງຕົ້ນປາກພາສາແປກໆແລະໄດ້ທຳນວາຍ

ກິຈການ 20:23 ເວັ້ນໄວ້ແຕ່ພຣະວິນຍານບໍຣິສຸດຊົງເຕືອນສະຕິເຮົາໃນທຸກໆບ້ານທຸກເມືອງວ່າ ເຄື່ອງຜູກມັດແລະຄວາມທຸກລຳບາກຄອຍຖ້າເຮົາຢູ່

ໂຣມ 5:5 ແລະຄວາມໄວ້ວາງใจບໍ່ຫ່ອນເຮັດໃຫ້ມີຄວາມເສັງใจເພາະຜິດຫວັງ ເພາະພຣະເຈົ້າໄດ້ຊົງເປັ່ງຄວາມຮັກຂອງພຣະຣອງເຂົ້າໃນใจຂອງພວກເຮົາ ດ້ວຍທາງພຣະວິນຍານບໍຣິສຸດ ຊຶ່ງພຣະອົງໄດ້ຊົງປະທານໃຫ້ແກ່ເຮົາທັງຫລາຍແລ້ວ

ໂຣມ 8:9 ອັນນຶ່ງ, ຖ້າແມ່ນພຣະວິນຍານຂອງພຣະເຈົ້າຊົງສະຖິດຢູ່ໃນເຈົ້າທັງຫລາຍຢ່າງແທ້ຈິງແລ້ວ ພວກເຈົ້າກໍບໍ່ຢູ່ຝ່າຍມະນຸດແຕ່ຢູ່ຝ່າຍພຣະວິນຍານ ແຕ່ຖ້າຜູ້ໃດບໍ່ມີພຣະວິນຍານຂອງພຣະ

ໂຣມ 8:13-16 ເພາະຖ້າເຈົ້າທັງຫລາຍດຳເນີນຊີວິດຕາມຝ່າຍເນື້ອກາຍ ພວກເຈົ້າຄົງຈະຕາຍ ແຕ່ຖ້າໂດຍຣິດພຣະວິນຍານພວກເຈົ້າໄດ້ທຳລາຍການຂອງຝ່າຍເນື້ອກາຍເສັຍ ເຈົ້າຄົງຈະ ມີຊີວິດຢູ່ 14 ເພາະວ່າພຣະວິນຍານຂອງພຣະເຈົ້າຊົງນຳພາຜູ້ໃດ ຜູ້ນັ້ນແຫລະ, ເປັນບຸດ ຂອງພຣະເຈົ້າ 15 ເຫດວ່າເຈົ້າທັງຫລາຍບໍ່ໄດ້ຮັບວິນຍານທີ່ໃຫ້ມີນິສັຍຢ່າງຂ້ອຍຂ້າ ຊຶ່ງນຳ ເຖິງຄວາມຢ້ານກົວອີກ ແຕ່ພວກເຈົ້າໄດ້ຮັບພຣະວິນຍານຜູ້ຊົງໃຫ້ເປັນບຸດຂອງພຣະເຈົ້າ ທີ່ໃຫ້ເຮົາທັງຫລາຍຮ້ອງເອີ້ນພຣະເຈົ້າວ່າ, “ອັບບາ” ຄືພຣະບິດາ 16 ຝ່າຍພຣະວິນຍານນັ້ນ ຊົງຮ່ວມເປັນພຍານກັບວິນຍານຂອງເຮົາທັງຫລາຍວ່າ ພວກເຮົາເປັນບຸດຂອງພຣະເຈົ້າ

ໂຣມ 8:26 ໃນທຳນອງດຽວກັນນັ້ນແຫລະ, ພຣະວິນຍານຊົງຊ່ວຍຊູເຮົາທັງຫລາຍເມື່ອພວກ ເຮົາອ່ອນກຳລັງວັງ ເພາະເຮົາທັງຫລາຍບໍ່ຮູ້ວ່າພວກເຮົາຄວນຈະອ້ອນວອນຂໍສິ່ງໃດ ແຕ່ ອົງພຣະວິນຍານຊົງຊ່ວຍຂໍແທນພວກເຮົາ ດ້ວຍການຖອດຫຸ່ນຢ່າງຫາຄຳເວົ້າບໍ່ໄດ້

ໂຣມ 15:13,19 ຂໍພຣະເຈົ້າຜູ້ຊົງປະທານຄວາມໄວ້ວາງใจ ຊົງໂຜດໃຫ້ເຈົ້າທັງຫລາຍບໍຣິບູນ ດ້ວຍຄວາມຊົມຊື່ນຍິນດີແລະຄວາມສຸກໃນຄວາມເຊື່ອ ເພື່ອເຈົ້າຈະໄດ້ເຕັມລົ້ນດ້ວຍ ຄວາມໄວ້ວາງใจ ໂດຍຣິດເດດຂອງພຣະວິນຍານບໍຣິສຸດ 19 ຄືດ້ວຍອິດທິຣິດແຫ່ງຫມາ ຍສຳຄັນແລະການອັດສະຈັນ ໂດຍຣິດເດດຂອງພຣະວິນຍານ ຈົນເຮົາໄດ້ປະກາດຂ່າວປະ ເສີດເຣື່ອງພຣະຄຣິດຢ່າງຄົບຖ້ວນ ຕັ້ງແຕ່ກຸງເຢຣູຊາເລັມອ້ອມໄປຍັງແຂວງອິນລີຣິກົນ

1 ໂກຣິນໂທ 2:10-13 ແຕ່ພຣະເຈົ້າໄດ້ຊົງສະແດງສິ່ງເຫລົ່ານັ້ນແກ່ເຮົາທັງຫລາຍທາງພຣະວິນ ຍານ ເພາະວ່າພຣະວິນຍານຊົງຢັ່ງຮູ້ທຸກສິ່ງ ແມ່ນເປັນຄວາມເລິກລັບຂອງພຣະເຈົ້າ 11 ດ້ວຍວ່າໃຜຫນໍ, ອາດຮູ້ຄວາມຄິດຂອງມະນຸດໄດ້ ເວັ້ນແຕ່ຈິດວິນຍານພາຍໃນມະນຸດຜູ້ ນັ້ນເອງ ດັ່ງນັ້ນແຫລະ, ພຣະທັຍຂອງພຣະເຈົ້າບໍ່ມີຜູ້ໃດຮູ້ໄດ້ ເວັ້ນແຕ່ພຣະວິນຍານຂອງ ພຣະເຈົ້າເທົ່ານັ້ນ 12 ເຮົາທັງຫລາຍບໍ່ໄດ້ຮັບວິນຍານຂອງໂລກ ແຕ່ໄດ້ຮັບພຣະວິນຍານຊຶ່ງ ມາຈາກພຣະເຈົ້າ ເພື່ອເຮົາທັງຫລາຍຈະໄດ້ຮູ້ເຖິງສິ່ງຕ່າງໆທີ່ພຣະເຈົ້າໄດ້ຊົງໂຜດປະທານ ແກ່ພວກເຮົານັ້ນ 13 ເຮົາບໍ່ໄດ້ກ່າວສິ່ງເຫລົ່ານີ້ດ້ວຍຖ້ອຍຄຳຊຶ່ງປັນຍາຂອງມະນຸດສອນໄວ້ ແຕ່ດ້ວຍຖ້ອຍຄຳຊຶ່ງພຣະວິນຍານໄດ້ຊົງສັ່ງສອນ ຄືເຮົາໄດ້ອະທິບາຍຄວາມຫມາຍຂອງ ເຣື່ອງຝ່າຍວິນຍານໃຫ້ຄົນທີ່ມີພຣະວິນຍານຟັງ

1 ໂກຣິນໂທ 3:16 ເຈົ້າທັງຫລາຍບໍ່ຮູ້ຫລືວ່າພວກເຈົ້າເປັນວິຫານຂອງພຣະເຈົ້າ ແລະພຣະວິນ ຍານຂອງພຣະເຈົ້າຊົງສະຖິດຢູ່ໃນພວກເຈົ້າ

1 ໂກຣິນໂທ 6:11 ເມື່ອກ່ອນມີບາງຄົນໃນພວກເຈົ້າເປັນຄົນຢ່າງນັ້ນ ແຕ່ເຈົ້າທັງຫລາຍໄດ້ຮັບ
ການຊົງຊຳຣະແລ້ວ ໄດ້ຖືກຊົງຕັ້ງໄວ້ສຳລັບພຣະເຈົ້າແລ້ວ ໄດ້ຖືກຊົງນັບເປັນຄົນຊອບທັມ
ໃນພຣະນາມຂອງພຣະເຢຊູຄຣິດເຈົ້າ ແລະໂດຍພຣະວິນຍານແຫ່ງພຣະເຈົ້າຂອງພວກເຮົາ
1 ໂກຣິນໂທ 12:3 ເຫດສັນນັ້ນເຮົາຈຶ່ງບອກເຈົ້າທັງຫລາຍໃຫ້ຮູ້ວ່າ ບໍ່ມີໃຜທີ່ເວົ້າດ້ວຍພຣະວິນ
ຍານຂອງພຣະເຈົ້າຈະກ່າວວ່າ, “ຂໍໃຫ້ພຣະເຢຊູຖືກດ່າ” ແລະບໍ່ມີໃຜອາດເວົ້າໄດ້ວ່າ, “ພຣະ
ເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ” ເວັ້ນໄວ້ແຕ່ຜູ້ທີ່ກ່າວໂດຍພຣະວິນຍານບໍຣິສຸດ
2 ໂກຣິນໂທ 3:17 ຄຳວ່າ “ອົງພຣະຜູ້ເປັນເຈົ້າ” ນັ້ນຫມາຍເຖິງພຣະວິນຍານແລະພຣະວິນຍານ
ຂອງອົງພຣະຜູ້ເປັນເຈົ້າຊົງຢູ່ທີ່ໃດ ເສຣີພາບກໍມີຢູ່ທີ່ນັ້ນ
2 ໂກຣິນໂທ 13:14 ຂໍໃຫ້ພຣະຄຸນຂອງພຣະເຢຊູຄຣິດເຈົ້າ ຄວາມຮັກຂອງພຣະເຈົ້າ ແລະ
ຄວາມຮ່ວມໃຈແຫ່ງພຣະວິນຍານບໍຣິສຸດ ຈົ່ງສະຖິດຢູ່ນຳເຈົ້າທັງຫລາຍທຸກຄົນເທີນ
ຄາລາເຕຍ 4:6 ແລະເພາະເຈົ້າທັງຫລາຍເປັນບຸດຂອງພຣະເຈົ້າແລ້ວ ພຣະອົງຈຶ່ງຊົງໃຊ້ພຣະ
ວິນຍານແຫ່ງພຣະບຸດຂອງພຣະອົງ ເຂົ້າມາໃນໃຈຂອງພວກເຮົາແລ້ວຮ້ອງວ່າ “ອັບບາ” ຄື
“ພຣະບິດາ”
ເອເຟໂຊ 1:13,14 ໃນພຣະອົງນັ້ນທ່ານທັງຫລາຍກໍເຫມືອນກັນ ເມື່ອໄດ້ຍິນພຣະທັມອັນ
ສັດຈິງ ຄືຂ່າວປະເສີດເຣື່ອງຄວາມພົ້ນຂອງພວກທ່ານ ແລະໄດ້ວາງໃຈໃນພຣະອົງ ກໍໄດ້ຖືກ
ຊົງປະທັບຕາຫມາຍໄວ້ດ້ວຍພຣະວິນຍານບໍຣິສຸດທີ່ຊົງສັນຍາໄວ້ນັ້ນ 14 ເປັນເຄື່ອງມັດຈຳ
ຂອງການຮັບມໍຣະດົກຂອງພວກເຮົາ ຈົນກວ່າເຮົາຈະໄດ້ຮັບເປັນກັມມະສິດ ເປັນທີ່ຖວາຍ
ສັຣເສີນແດ່ພຣະກຽດຕິຍົດຂອງພຣະອົງ
ເອເຟໂຊ 2:18 ເພາະໂດຍພຣະອົງນີ້ແຫລະ, ເຮົາທັງສອງພວກຈຶ່ງມີໂອກາດເຂົ້າເຝົ້າພຣະບິດາ
ໂດຍພຣະວິນຍານອົງດຽວກັນ
ເອເຟໂຊ 4:30 ແລະຢ່າເຮັດໃຫ້ພຣະວິນຍານບໍຣິສຸດຂອງພຣະເຈົ້າເສັງພຣະທັຍ ເພາະໂດຍ
ພຣະວິນຍານນັ້ນທ່ານທັງຫລາຍໄດ້ຖືກຊົງປະທັບຕາຫມາຍໄວ້ ເພື່ອວັນທີ່ຈະຊົງໄຖ່ໃຫ້ພົ້ນ
1 ເທຊະໂລນິກ 4:8 ສັນນັ້ນຜູ້ທີ່ຜ່າຜືນນັ້ນກໍບໍ່ຜ່າຜືນຕໍ່ມະນຸດ ແຕ່ຜ່າຜືນຕໍ່ພຣະເຈົ້າ ຜູ້
ຊົງໂຜດປະທານພຣະວິນຍານບໍຣິສຸດຂອງພຣະອົງໃຫ້ແກ່ເຈົ້າທັງຫລາຍ
1 ເທຊະໂລນິກ 5:19 ຢ່າຫັກຫ້າມພຣະວິນຍານ
2 ເທຊະໂລນິກ 2:13 ເພື່ອພວກຄົນທີ່ບໍ່ເຊື່ອຄວາມຈິງ ແຕ່ຍິນດີໃນການຊົ່ວຮ້າຍ ຈະໄດ້ຖືກ

ພິພາກສາລົງໂທດຫມົດທຸກຄົນ (1 ເປໂຕ 1:2)

ຕິໂຕ 3:5,6 ພຣະອົງໄດ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ ບໍ່ແມ່ນຍ້ອນກິຈການອັນຊອບທັມທີ່ພວກເຮົາເອງໄດ້ເຮັດ ແຕ່ພຣະອົງໄດ້ຊົງພຣະກະຣຸນາຈຳຣະໃຫ້ພວກເຮົາມີໃຈບັງເກີດໃຫມ່ ແລະຊົງສ້າງພວກເຮົາຂຶ້ນໃຫມ່ໂດຍພຣະວິນຍານບໍຣິສຸດ 6 ພຣະວິນຍານອົງນັ້ນ ພຣະເຈົ້າໄດ້ຊົງຖອກໃສ່ເຮົາທັງຫລາຍຢ່າງບໍຣິບູນ ໂດຍພຣະເຢຊູຄຣິດພຣະຜູ້ຊົງໂຜດໃຫ້ພົ້ນຂອງເຮົາທັງຫລາຍ

ເຮັບເຣີ 2:4 ທັງນີ້ພຣະເຈົ້າກໍຊົງເປັນພຍານຮ່ວມກັນກັບເຂົາ ໂດຍຊົງສະແດງຫມາຍສຳຄັນການອັດສະຈັນ ການອິດທິຣິດຕ່າງໆ ແລະໂດຍຂອງປະທານຈາກພຣະວິນຍານບໍຣິສຸດ ຊຶ່ງຊົງປະທານຕາມນ້ຳພຣະທັຍຂອງພຣະອົງ

ເຮັບເຣີ 10:15 ແລະພຣະວິນຍານບໍຣິສຸດຊົງເປັນພຍານໃຫແກ່ພວກເຮົາເຫມືອນກັນ ເພາະວ່າພຣະອົງໄດ້ຊົງກ່າວໄວ້ແລ້ວວ່າ,

1 ເປໂຕ 1:2 ຄືຜູ້ທີ່ພຣະເຈົ້າພຣະບິດາໄດ້ຊົງເລືອກໄວ້ແລ້ວ ຕາມທີ່ພຣະອົງໄດ້ຊົງຮູ້ລ່ວງຫນ້າໄວ້ກ່ອນ ເພື່ອພຣະວິນຍານຈະຊົງຈຳຣະໃຫ້ບໍຣິສຸດ ຈະໃຫ້ນົບນ້ອມເຊື່ອຟັງພຣະເຢຊູຄຣິດ ແລະຈະໃຫ້ຮັບການຊົດດ້ວຍພຣະໂລຫິດຂອງພຣະອົງ ຂໍພຣະຄຸນແລະສັນຕິສຸກຈົ່ງບັງເກີດທະວີຄູນແກ່ທ່ານທັງຫລາຍເທີນ

2 ເປໂຕ 1:21 ເພາະວ່າຄຳທຳນວາຍນັ້ນບໍ່ໄດ້ມາຈາກນ້ຳໃຈຂອງມະນຸດຈັກເທື່ອ ແຕ່ມະນຸດໄດ້ກ່າວຄຳທີ່ມາຈາກພຣະເຈົ້າ ຕາມທີ່ພຣະວິນຍານບໍຣິສຸດຊົງດົນໃຈ

1 ໂຍຮັນ 4:2 ດ້ວຍຂໍ້ນີ້ແຫລະ, ເຈົ້າທັງຫລາຍກໍຈະຮູ້ຈັກພຣະວິນຍານຂອງພຣະເຈົ້າ ຄືວິນຍານທັງປວງທີ່ຍອມຮັບຮູ້ວ່າພຣະເຢຊູຄຣິດໄດ້ສະເດັດລົງມາຮັບຊາດເປັນມະນຸດ ວິນຍານນັ້ນກໍມາຈາກພຣະເຈົ້າ

1 ໂຍຮັນ 5:7,8 ມີພຍານຢູ່ສາມປະການ, 8 ຄືພຣະວິນຍານ, ນ້ຳ ແລະພຣະໂລຫິດ ແລະພຍານທັງສາມນີ້ສອດຄ້ອງກັນ

ຢູດາ 1:20 ແຕ່ຝ່າຍທ່ານທີ່ຮັກທັງຫລາຍເອີຍ, ຈົ່ງສ້າງຕົວເອງຂຶ້ນເທິງຄວາມເຊື່ອອັນສັກສິດທີ່ສຸດຂອງພວກທ່ານ ແລະຈົ່ງອ້ອນວອນໃນພຣະວິນຍານບໍຣິສຸດ